ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1027 /ອຄ.ກຄພນ.
ນະຄອນຫຼວງວຽງຈັນ, ວັນທີ 31 ກໍລະກົດ 2018

# ແຈ້ງການ

**ເຖິງ:** ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ໃຫ້ສືບຕໍ່ເອົາໃຈໃສ່ຊີ້ນຳໃນການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ຢ່າງໃກ້ຊິດ ເພື່ອຮອງຮັບໄພພິບັດນ້ຳຖ້ວມ ໃນປີ 2018.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ, ສະບັບເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010;
- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ເລກທີ 71/ນຍ, ລົງວັນທີ 06 ຕຸລາ 2017, ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ;
- ອີງຕາມ ສະພາບການຜັນແປທາງດ້ານດິນຟ້າອາກາດ ຝົນຈະສືບຕໍ່ຕົກໃນຂອບເຂດທົ່ວປະເທດ.

ເພື່ອຮັກສາສະຖຽນລະພາບທາງດ້ານລາຄາສິນຄ້າ ແລະ ເສດຖະກິດໃຫ້ໝັ້ນຄົງ, ບໍ່ໃຫ້ມີຜົນກະທົບໄປສູ່ບັນຫາອື່ນໆ ທີ່ຈະກາຍເປັນປະກົດການຫຍໍ້ທໍ້ໃນສັງຄົມ, ຮັບປະກັນໃຫ້ມີຄວາມສະຫງົບ, ຜູ້ບໍລິໂພກໄດ້ຮັບຄວາມເປັນທຳທາງດ້ານລາຄາ, ປະລິມານ, ຄຸນນະພາບ ແລະ ທັງເປັນການປະຕິບັດພາລະບົດບາດຂອງຂະແໜງການໃນວຽກງານຕິດຕາມ, ກວດກາ, ຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ, ຫຼີກລ້ຽງການສວຍໂອກາດຂຶ້ນລາຄາ ເພື່ອເອົາກຳໄລຂອງພໍ່ຄ້າມີການທີ່ສ້າງຄວາມປັ່ນປ່ວນທາງດ້ານລາຄາ, ຮັບປະກັນການສະໜອງໃຫ້ພຽງພໍກັບຄວາມຕ້ອງການຂອງຕະຫຼາດພາຍໃນປະເທດ ໂດຍສະເພາະແມ່ນຊ່ວງໄລຍະທີ່ຫຼາຍແຂວງໄດ້ຮັບຜົນກະທົບຈາກໄພພິບັດນ້ຳຖ້ວມ ໃນປີ 2018 ນີ້.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:

1. ໃຫ້ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ເອົາໃຈໃສ່ຊີ້ນຳການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເພື່ອບໍ່ໃຫ້ລາຄາເໜັງຕີງຂຶ້ນແບບບໍ່ມີເຫດຜົນເວົ້າລວມ, ເວົ້າສະເພາະແມ່ນເພື່ອຮອງຮັບໄພພິບັດນ້ຳຖ້ວມ ໃນປີ 2018. ພ້ອມດຽວກັນນັ້ນ, ສະເໜີໃຫ້ຄະນະຊີ້ນຳວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການຢູ່ຂັ້ນແຂວງ ແລະ ຂັ້ນເມືອງ ທີ່ໄດ້ຮັບການແຕ່ງຕັ້ງແລ້ວນັ້ນ ເພື່ອເຮັດພາລະບົດບາດຂອງຕົນເອງຢ່າງເຂັ້ມງວດ ລວມໄປເຖິງໂຄສະນາເຜີຍແຜ່ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງຢູ່ພາຍໃນທ້ອງຖິ່ນຕົນ.
2. ໃຫ້ສືບຕໍ່ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຢູ່ພາຍໃນແຂວງ ເພື່ອຈັດຕັ້ງປະຕິບັດວຽກງານຕິດຕາມກວດກາ ແລະ ຄຸ້ມຄອງລາຄາສິນຄ້າ ທີ່ມີຜົນກະທົບໄວຕໍ່ຊີວິດການເປັນຢູ່ຂອງປະຊາຊົນຢູ່ພາຍໃນແຂວງຂອງຕົນ ເປັນຕົ້ນແມ່ນສິນຄ້າສະບຽງອາຫານ ເຊັ່ນ: ປະເພດຊີ້ນ, ປະເພດເຂົ້າກິນ, ປະເພດປາ, ປະເພດໄກ່ ແລະ ພືດຜັກອື່ນໆ ລວມທັງການສະໜອງເຄື່ອງອຸປະໂພກ-ບໍລິໂພກ ແລະ ສິນຄ້າປະເພດອຸປະກອນກໍ່ສ້າງທົ່ວໄປ ບົນພື້ນຖານຄວາມເປັນເອກະພາບ ແລະ ການມີສ່ວນຮ່ວມຂອງທຸກພາກສ່ວນ ພ້ອມທັງຮັບປະກັນການດຸ່ນດ່ຽງການສະໜອງ ແລະ ຄວາມຕ້ອງການ.

3. ໃຫ້ກຳນົດໂຄງປະກອບລາຄາສິນຄ້າຄວບຄຸມ ປະເພດເຂົ້າ, ປະເພດຊີ້ນ (ໝູ, ງົວ, ຄວາຍ, ໄກ່, ເປັດ ແລະ ປາ) ແລະ ພືດຜັກອື່ນໆ ລວມທັງສິນຄ້າປະເພດອຸປະໂພກ-ບໍລິໂພກທົ່ວໄປ ຕາມການແບ່ງຂັ້ນຄຸ້ມຄອງ ຢູ່ໃນແຕ່ລະຂອດຢ່າງຊັດເຈນ ເຊັ່ນ: ລາຄາຕົ້ນທຶນ (ຜະລິດຢູ່ພາຍໃນ, ນຳເຂົ້າຈາກແຂວງໃກ້ຄຽງ ຫຼື ນຳເຂົ້າຈາກຕ່າງປະເທດ), ຂອດຂາຍຍົກ ແລະ ຂອດຂາຍຍ່ອຍ ຫຼື ຂອດບໍລິການ ເພື່ອຫຼີກເວັ້ນປັດໃຈການສວຍໂອກາດຂຶ້ນລາຄາ ແບບບໍ່ມີເຫດຜົນ.

4. ກ່ອນຈະປັບຂຶ້ນລາຄາສິນຄ້າ ແລະ ຄ່າບໍລິການ ໃດໜຶ່ງນັ້ນ (ສຳລັບສິນຄ້າຄວບຄຸມຕາມ ບັນຊີ ກ) ຕ້ອງໄດ້ຮັບການພິຈາລະນາຮັບຮອງຈາກຄະນະຊີ້ນຳວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການຢູ່ຂັ້ນແຂວງ, ນະຄອນຫຼວງ ບົນພື້ນຖານຂໍ້ຕົກລົງເລກທີ 71/ນຍ, ລົງວັນທີ 06 ຕຸລາ 2017.

5. ໃຫ້ສືບຕໍ່ເປັນເຈົ້າການລະດົມ, ຊຸກຍູ້ ຜູ້ປະກອບການສະໜອງສິນຄ້າປະເພດສະບຽງອາຫານທີ່ຈຳເປັນດັ່ງກ່າວນັ້ນໃຫ້ພຽງພໍກັບຄວາມຕ້ອງການຂອງຜູ້ບໍລິໂພກ, ພ້ອມທັງສືບຕໍ່ຕິດຕາມ ແລະ ກວດກາ ຢ່າງເປັນປະຈຳໃນທ້ອງຕະຫຼາດຢູ່ພາຍໃນທ້ອງຖິ່ນຂອງຕົນ ດ້ວຍວິທີການແຕ່ງຕັ້ງໝູນວຽນພະນັກງານລົງໄປຕິດຕາມ, ກວດກາ ແລະ ຊີ້ນຳ ເປັນປົກກະຕິ.

6. ໃຫ້ຈັດຕັ້ງປະຕິບັດ ແລະ ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນໄລຍະວິກິດການໄພນ້ຳຖ້ວມດັ່ງກ່າວນີ້ ຢູ່ພາຍໃນທ້ອງຖິ່ນຕົນ ດ້ວຍຄວາມຮັບຜິດຊອບສູງ ແລະ ມອບໃຫ້ເຈົ້າໜ້າທີ່ກວດກາການຄ້າເພີ່ມທະວີການກວດກາເປັນປົກກະຕິ.

7. ໃນໄລຍະຈັດຕັ້ງປະຕິບັດວຽກງານດັ່ງກ່າວ, ມີບັນຫາໃດທີ່ຍັງບໍ່ທັນຈະແຈ້ງ ຫຼື ພົບຄວາມຫຍຸ້ງຍາກ ໃຫ້ສະເໜີລາຍງານເຖິງກະຊວງອຸດສາຫະກຳ ແລະ ການຄ້າ (ກົມການຄ້າພາຍໃນ) ໃນເວລາອັນຄວນ ເພື່ອພ້ອມກັນແກ້ໄຂບັນຫາທີ່ເກີດຂຶ້ນທັນສະພາບການ.

8. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງອຸດສາຫະກຳແລະການຄ້າ ລັດຖະມົນຕີ

ນ. ເຂັມມະນີ ພົນເສນາ

ບ່ອນນຳສົ່ງ:
- ຫ້ອງວ່າການສູນກາງພັກ 01 ສະບັບ (ເພື່ອຮັບຊາບ);
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 01 ສະບັບ (ເພື່ອຮັບຊາບ);
- ຫ້ອງວ່າການປົກຄອງແຂວງໃນທົ່ວປະເທດ 01 ສະບັບ (ເພື່ອຊີ້ນຳໃນການຈັດຕັ້ງປະຕິບັດ);
- ຫ້ອງການ, ສະຖາບັນ ແລະ ບັນດາກົມ ອ້ອມຂ້າງກະຊວງ ອຄ ພາກສ່ວນ 01 ສະບັບ (ເພື່ອຮັບຊາບ);
- ສຳເນົາ 02 ສະບັບ.